# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດທີ 9 ມັງກອນ 2022 (9-1-2022)

---

## ຜູ້ປົກຄອງທີ່ຫ່ວງໃຍປະຊາກອນຂອງພຣະອົງ

*ຜູ້ນໍາຫຍັງທີ່ທ່ານຮູ້ວ່າເປັນຫ່ວງເປັນໃຍນໍາປະຊາກອນຂອງເຂົາແທ້ໆ?*

**ຈຸດສໍາຄັນໃນບົດຮຽນ:** ພຣະເຢຊູຊົງນໍາແລະດູແລປະຊາກອນຂອງພຣະອົງ.

**ພຣະຄັມພີຕອບສນອງຕໍ່ຊີວິດ:** ກ່ອນທີ່ໂທຣະສັບຂອງເຮົາຈະມີກ້ອງຖ່າຍຮູບຕິດມານໍາ, ພວກເຮົາຕ້ອງໄດ້ຊື້ຟິມສໍາລັບກ້ອງຖ່າຍຮູບເຮົາ- ແລະຫຼັງຈາກນັ້ນເຮົາຍັງໄດ້ຈ່າຍຄ່າລ້າງຮູບອີກ. George Eastman ແມ່ນຄົນທີ່ຜລິດກ້ອງຖ່າຍຮູບຊຶ່ງທຸກຄອບຄົວສາມາດຊື້ໄດ້. ໜັງສືພິມນິວຢອກໄທມ໌ເວົ້າເຣື່ອງຂອງລາວວ່າ, "ລາວເປັນຜູ້ທີ່ສົມຄວນໄດ້ຮັບການຂອບຄຸນທີ່ສຸດໃນໂລກ." ໜັງສືພິມຂຽນວ່າ, ບໍ່ແມ່ນເພາະຟິມແລະກ້ອງຖ່າຍຮູບເທົ່ານັ້ນ, ແຕ່ຍ້ອນວິທີການແລ່ນທຸຣະກິດອີສແມນໂກດັກຂອງລາວ ຄື:

- ລາວຫຼຸດຜ່ອນຊົ່ວໂມງທໍາງານພະນັກງານຂອງລາວລົງ.
- ລາວໄດ້ຈັດໃຫ້ມີບໍານານແລະປະກັນພັຍຊີວິດແກ່ພະນັກງານຂອງລາວ.
- ລາວຈ້າງຜູ້ຍິງແລະຄົນພິການເຂົ້າເຮັດວຽກ.

ມີຫຼາຍບໍຣິສັດໄດ້ຈັດຫາຜົນປໂຍດຄ້າຍຄືກັນໃນປະຈຸບັນ, ແຕ່ເມື່ອກ່ອນນັ້ນ, ບໍ່ມີໃຜເຮັດມາກ່ອນ. ບໍ່ມີໃຜຄິດເຖິງຜົນປໂຍດຢ່າງນັ້ນແກ່ຄົນງານ, ແຕ່ ອີສແມນໄດ້ເຮັດ. ທັສນະຄະຕິຂອງ ຈອດ ອີສແມນ ຕໍ່ຜູ້ອື່ນ ແນ່ນອນເປັນໜ້າຍົກຍ້ອງ, ແຕ່ມັນເບົາບາງເມື່ອປຽບທຽບກັບການດູແລຂອງພຣະເຢຊູຕໍ່ປະຊາກອນຂອງພຣະອົງ. ຖານະພຣະຜູ້ລ້ຽງທີ່ຮັກຂອງເຮົາ, ພຣະເຢຊູໄດ້ສະແດງຄວາມຮັກຂອງພຣະອົງ ໃນບົດບາດທີ່ພຣະອົງນໍາແລະດູແລເຮົາຢ່າງໃດ.

**ພຣະຄັມພີກ່າວວ່າແນວໃດ** : ( ເບິ່ງຕາມຂໍ້ 1, 2, ແລະ 3, )

### ການສຶກສາພຣະຄັມພີ

### 1. <u>ມີກາ 5:2-5ກ</u>.

*2 ເບັດເລເຮັມ ເອຟຣາທາເອີຍ ເຈົ້າເປັນເມືອງນ້ອຍເມືອງນຶ່ງໃນເຂດຢູດາ ແຕ່ວ່າ ເຮົາຈະແຕ່ງຕັ້ງໃຫ້ມີຜູ້ນຶ່ງມາປົກຄອງພວກ
ອິສຣາເອນ ທີ່ເຊື້ອສາຍຂອງເພິ່ນຈະມາຈາກສມັຍເດີມ. 3 ດັ່ງນັ້ນ ພຣະຜູ້ເປັນເຈົ້າຈະປະໄພ່ພົນຂອງພຣະອົງໃຫ້ສັດຕູ ຈົນ
ເຖິງເວລາທີ່ຍິງຖືພາອອກລູກໄດ້ຜູ້ຊາຍ ຄັນແລ້ວບັນດາພີ່ນ້ອງໃນເມືອງທີ່ຍັງຖືກເນລະເທດ ກໍຈະມາທ້ອນໂຮມກັນກັບປະຊາ
ຊົນອິສຣາເອນ. 4 ເວລາຜູ້ນັ້ນມາ ເພິ່ນຈະມາປົກຄອງປະຊາຊົນດ້ວຍອໍານາດທີ່ມາແຕ່ພຣະຜູ້ເປັນເຈົ້າແລະດ້ວຍສງ່າຣາສີຂອງ
ພຣະອົງ ປະຊາຊົນຂອງເພິ່ນຈະຢູ່ຢ່າງປອດພັຍ ກໍຍ້ອນວ່າມະນຸດທຸກຄົນໃນໂລກ ຈະຮັບຮູ້ຄວາມຍິ່ງໃຫຍ່ຂອງເພິ່ນ. 5 ເພິ່ນ
ຈະເປັນຜູ້ນໍາເອົາຄວາມສງົບສຸກມາ.*

ພວກເຮົາຜູກພັນກັບພວກຜູ້ທໍານວາຍ ທີ່ມີແຫຼ່ງຂ່າວການເຕືອນພັຍແລະການກ່າວໂທດ. ເພື່ອໃຫ້ແນ່ໃຈ, ມີກາໄດ້ມີສ່ວນແຜ່ຂ່າວສານດັ່ງກ່າວນັ້ນ, ແຕ່ ລາວໄດ້ປ່າວປະກາດຄວາມຫວັງແກ່ຢູດາແລະອິສຣາເອນເໝືອນກັນ. ໄພ່ພົນຂອງພຣະເຈົ້າໄດ້ຮັບການນໍາດ້ວຍເຄືອຂ່າຍຜູ້ນໍາທີ່ອ່ອນແອ, ແລະປະຊາຊົນຈຶ່ງໄດ້ລໍຄອຍຄວາມຫວັງແລະຄວາມສງົບສຸກ. ມີກາໄດ້ຊີ້ໄປຫາຜູ້ປົກຄອງທີ່ຕ່າງໝູ່ແລະສະເພາະ ຜູ້ທີ່ຈະນໍາເອົາຄວາມຫວັງແລະຄວາມສງົບສຸກທີ່ເຂົາປາຖນາມາໃຫ້ເຂົາ.

ຜູ້ປົກຄອງຜູ້ນີ້ຈະມາຈາກ "ເບັດເລເຮັມ ເອຟຣາທາ." ໃນເມື່ອເບັດເລເຮັມເປັນບ້ານເກີດຂອງກະສັດດາວິດ(1 ຊມອ 16:1), ດັ່ງນັ້ນນີ້ເບິ່ງຄືວ່າເປັນບ່ອນບໍ່ສຳຄັນສຳລັບຜູ້ປົກຄອງຈະມາເກີດ, ໂດຍສະເພາະເມື່ອທຽບກັບເມືອງໃຫຍ່ກຸງເຢຣູຊາເລັມຫ່າງໄກພຽງຫ້າໄມລ໌ເທົ່ານັ້ນ. ກະສັດຍິ່ງໃຫຍ່ໃນພຣະຄັມພີເດີມໄດ້ເກີດໃນເຢຣູຊາເລັມ, ແລະພຣະເຢຊູ, ກະສັດເໜືອກະສັດ, ກໍໄດ້ເກີດຢູ່ທີ່ນັ້ນ.

ຄວາມຫວັງແລະການປົດປ່ອຍນີ້ ຈະບໍ່ເກີດຂຶ້ນທັນທີທັນໃດໃນສມັຍຂອງມີກາ. ຄວາມຈິງແລ້ວ, ກວ່າ 700 ປີຜ່ານໄປກ່ອນທີ່ຈະບັນລຸ. ຊາວຢິວຈະຕ້ອງຜ່ານລະດູການທີ່ "ອິສຣາເອນຈະຖືກປະຖິ້ມ" ຍ້ອນການທໍຣະຍົດຂອງເຂົາ. ການປະຖິ້ມນີ້, ແຕ່ວ່າ, ຈະບໍ່ຖາວອນ. ຈາກຖ້າມກາງພວກເຂົາ ຈະມີຜູ້ປົກຄອງເກີດມາ ຜູ້ທີ່ຈະລຸກຂຶ້ນແລະລ້ຽງດູໄພ່ພົນຂອງພຣະເຈົ້າ. ນີ້ອາດໝາຍເຖິງການສິ້ນສຸດຂອງການເນຣະເທດ, ຊຶ່ງຈະໝາຍເຖິງຄວາມພົ້ນທີ່ພຣະເຢຊູຈະນຳມາໃຫ້ຊາວຢິວໂດຍທາງຄວາມສັມພັນກັບພຣະອົງ.

*ທ່ານລໍຄອຍຄວາມສງົບສຸກນານທີ່ສຸດຢູ່ໃສ?*

ຄຳທຳນວາຍຂອງມີກາກ່ຽວກັບບ່ອນກຳເນີດຂອງພຣະເຢຊູບອກເຮົາມາກມາຍກ່ຽວກັບປະເພດຜູ້ປົກຄອງວ່າເປັນຄົນຢ່າງໃດ. "ພຣະອົງຈະລຸກຂຶ້ນແລະລ້ຽງດູເຂົາດ້ວຍຣິດອຳນາດທີ່ມາແຕ່ອົງພຣະຜູ້ເປັນເຈົ້າ (ຂໍ້ 4). ລຸກຂຶ້ນໝາຍຄວາມວ່າເພິ່ນຈະຮັບຕຳແໜ່ງກະສັດ. ແມ່ນແຕ່ຜູ້ປົກຄອງທີ່ດີທີ່ສຸດມີຄວາມຕັ້ງໃຈທີ່ດີທີ່ສຸດກໍສາມາດລົ້ມລົງໄດ້, ແຕ່ ພຣະມະຫາກະສັດຈະປົກຄອງ "ດ້ວຍຣິດອຳນາດຂອງອົງພຣະຜູ້ເປັນເຈົ້າ." ຣິດອຳນາດແລະສງ່າຣາສີຂອງກະສັດ ມາຈາກພຣະເຈົ້າເອງ. ພຣະມະຫາກະສັດບໍ່ພຽງແຕ່ປົກຄອງດ້ວຍຣິດອຳນາດ ແລະສົມບູນແບບເທົ່ານັ້ນ, ແຕ່ພຣະອົງຈະປົກຄອງດັ່ງຜູ້ລ້ຽງແກະເໝືອນກັນ. ພາກອື່ນໆອ້າງເຖິງພຣະເຈົ້າໃນຖານະຜູ້ລ້ຽງແກະ(ເອເຊກຽນ 34:11-16), ແຕ່ທີ່ຮູ້ກັນດີທີ່ສຸດແມ່ນເພງສັຣເສີນບົດ23. ໃນເພງສັຣເສີນບົດນີ້, ດາວິດໄດ້ລະບາຍສີຮູບພາບຂອງພຣະເຈົ້າຖານະຜູ້ລ້ຽງແກະຜູ້ທີ່ຈັດຫາ, ປ້ອງກັນ, ແລະນຳພາຢ່າງສົມບູນ.

## 2. <u>ມັດທາຍ 2:1-6</u>.

*1 ເມື່ອພຣະເຢຊູຊົງປະສູດຢູ່ບ້ານເບັດເລເຮັມແຂວງຢູດາຍໃນສມັຍຂອງກະສັດເຮໂຣດ ເບິ່ງແມ, ມີພວກໂຫຣາຈານຈາກທິດຕາ*
*ເວັນອອກມາຍັງກຸງເຢຣູຊາເລັມ. 2 ຖາມວ່າ, "ກຸມມານຜູ້ເກີດມາເປັນກະສັດຂອງຊາດຢິວນັ້ນຢູ່ທີ່ໃດ ເພາະເຮົາໄດ້ເຫັນດາວ*
*ຂອງທ່ານປະກົດຂຶ້ນ ເຮົາຈຶ່ງມາເພື່ອຈະຂາບໄຫວ້ທ່ານ." 3 ຄັນກະສັດເຮໂຣດຊົງໄດ້ຍິນດັ່ງນີ້ແລ້ວກໍວຸ້ນວາຍພຣະທັຍ ທັງ*
*ໄທກຸງເຢຣູຊາເລັມກໍພ້ອມກັນວຸ້ນວາຍດ້ວຍ. 4 ເມື່ອກະສັດຊົງຮັບສັ່ງໃຫ້ປະຊຸມບັນດາປະໂຣຫິດຕົນໃຫຍ່ກັບພວກນັກທັມຂອງ*
*ປະຊາຊົນ ພຣະອົງຈຶ່ງຊົງຖາມເຂົາວ່າ, "ຜູ້ເປັນພຣະຄຣິດນັ້ນຈະບັງເກີດຢູ່ທີ່ໃດ." 5 ເຂົາທູນຕອບວ່າ, "ໃນບ້ານເບັດເລເຮັມ*
*ແຂວງຢູດາຍເພາະຜູ້ປະກາດພຣະທັມໄດ້ຂຽນໄວ້ດັ່ງນີ້ວ່າ, 6 'ບ້ານເບັດເລເຮັມໃນແຜ່ນດິນຢູດາຍເອີຍເຈົ້າກໍບໍ່ແມ່ນຜູ້ເລັກນ້ອຍ*
*ທີ່ສຸດໃນຖ້າມກາງພວກເຈົ້ານາຍຂອງຢູດາຍເພາະວ່າເຈົ້ານາຍຜູ້ນຶ່ງຈະອອກມາຈາກເຈົ້າຜູ້ຊຶ່ງຈະປົກຄອງອິສຣາເອນໄພ່ພົນ*
*ຂອງເຮົາ'."*

ພຣະກຳເນີດຂອງພຣະເຢຊູໃນບ້ານທີ່ມືດມົວຂອງຊາວຢິວ ເປັນທີ່ຮູ້ຈັກພຽງຄົນກຸ່ມນ້ອຍເຊັ່ນ: ມາຣີອາ, ໂຢເຊັບ, ຄອບຄົວຂອງເຂົາ, ຊາວບ້ານເບັດເລເຮັມ, ແລະພວກຜູ້ລ້ຽງແກະເທົ່ານັ້ນ. ຂ່າວການເກີດຂອງພຣະເຢຊູ ອາດແຜ່ກະຈາຍໄປໃນຂນະທີ່ປະຊາຊົນໃນບ້ານໄດ້ບອກຕໍ່ກັນໄປກ່ຽວກັບຄຳລາຍງານທີ່ຜິດປົກກະຕິຈາກຄົນລ້ຽງແກະ. ທັງໝົດນັ້ນໄດ້ປ່ຽນໄປເມື່ອຄົນແປກໜ້າ "ໄດ້ມາເຖິງເຢຣູຊາເລັມ," ຮ້ອງປ່າວວ່າເຂົາກຳລັງຊອກຫາ "ກຸມມານຜູ້ເກີດມາເປັນກະສັດຂອງຊາດຢິວ"(ຂໍ້2).

ເຣື່ອງນັ້ນເປັນທີ່ສົນໃຈຂອງກະສັດເຮໂຣດແລະທົ່ວກຸງເຢຣູຊາເລັມ. ຄຳຖາມຂໍ້ແລກທີ່ຂ້ອຍຄິດວ່າຄົນຈະຖາມຄົນແປກໜ້າຜູ້ນີ້ແມ່ນ, "ເຈົ້າເປັນໃຜແລະເຈົ້າຮູ້ກ່ຽວກັບກະສັດນີ້ຢ່າງໃດ?" ມັດທາຍໄດ້ບອກເຮົາພຽງແຕ່ເຂົາແມ່ນ "ພວກໂຫຣາຈານຈາກທິດຕາເວັນອອກ." ພວກໂຫຣາຈານແມ່ນຄຳສັບເຈາະຈົງເຖິງຜູ້ຊາຍທີ່ໄດ້ຮັບການອົບຮົມພິເສດ, ແຕ່ເລັງເຖິງຊົນຊັ້ນປະໂຣຫິດໃນບາບີໂລນ ຜູ້ໃຫ້ຄຳປຶກສາກະສັດ. ດານີເອນແລະເພື່ອນຂອງລາວໄດ້ຮັບການຝຶກອົບຮົມປະເພດນັ້ນຫຼັງຈາກທີ່ເຂົາຖືກຈັບເປັນຊະເລີຍຕໍ່ບາບີໂລນ(ດານີເອນ 1:3-4). ບົດບັນທຶກດຶກດຳບັນເອີ່ຍເຖິງຄົນກຸ່ມນັ້ນໃນບາບີໂລນແລະເປີເຊັຽ. ຄຳວ່າ "ວິເສດ" ມາຈາກຄຳເວົ້າພາສາກຣີກແປວ່າພວກໂຫຣາຈານ. ພວກເຂົາເປັນທີ່ຮູ້ຈັກຍ້ອນຄວາມຮູ້ ແລະຄວາມຊຳນານທາງດ້ານໂຫຣາສາດ, ຣັຖບານ, ແລະສາສນາຂອງເຂົາ.

ຄົນພວກນີ້ຮູ້ຈັກຊອກຫາພຣະກຸມມານທີ່ເກີດມາເປັນກະສັດເພາະວ່າເຂົາ "ໄດ້ເຫັນດາວຂອງທ່ານປາກົດຂຶ້ນ." ບໍ່ມີຜູ້ໃດສາມາດເວົ້າໄດ້ຢ່າງໝັ້ນໃຈວ່າເຂົາໄດ້ເຫັນຫຍັງແທ້, ແຕ່ເຖິງຢ່າງໃດກໍຕາມເບິ່ງຄືວ່າ, ຜູ້ຊາຍທີ່ມີຊື່ສຽງດີເຫຼົ່ານີ້ຄືຈົ່ງວ່າພົວພັນກັບໝາຍສຳຄັນໃນທ້ອງຟ້າໃນຕອນກາງຄືນກັບຄຳທຳນວາຍເຖິງບາຣາອາມໃນ ຈົດເຊັນບັນຊີ 24:17 "ດາວດວງນຶ່ງມາຈາກຢາໂຄບ, ອົງຊົງຣິດຈະເກີດຂຶ້ນຈາກອິສຣາເອນ." ເມື່ອເຂົາເຫັນດາວນັ້ນພວກເຂົາຈຶ່ງໄປບ່ອນທີ່ພວກເຂົາຄິດວ່າກະສັດຢິວອົງໃດອົງນຶ່ງຈະເກີດມາຄື: ເຢຣູຊາເລັມ. ຂນະທີ່ຂ່າວເຣື່ອງກະສັດອົງໃໝ່ເລີ້ມແຜ່ກະຈາຍໄປ, ກະສັດເຮໂຣດແລະປະຊາຊົນທັງໝົດໃນກຸງເຢຣູຊາເລັມກໍພາກັນ "ວຸ້ນວາຍໃຈຢ່າງໜັກ." ເຮໂຣດຮູ້ສຶກບໍ່ປອດພັຍຢ່າງແຮງຕໍ່ຕຳແໜ່ງຂອງຕົນ, ດັ່ງນັ້ນ ຄວາມຄິດກ່ຽວກັບກະສັດອົງອື່ນຈຶ່ງເປັນສິ່ງລົບກວນໃຈເພິ່ນ. ສະນັ້ນ ເພິ່ນຈຶ່ງໄດ້ຖາມບັນດາປະໂຣຫິດຕົນໃຫຍ່ກັບພວກນັກທັມວ່າຜູ້ເປັນພຣະເມຊີອານັ້ນຈະບັງເກີດຢູ່ທີ່ໃດ, ແລະເຂົາກໍໄດ້ເລົ່າຄຳທຳນວາຍຂອງມີກາໃຫ້ພຣະອົງຟັງ. ຖ້າ "ກະສັດຂອງຊາວຢິວ" ໄດ້ສະເດັດເຂົ້າມາໃນໂລກ ເພິ່ນຈະບໍ່ສາມາດຖືກເມີນເສີຍ. ທຸກຄົນທີ່ໄດ້ຍິນຂ່າວຕ້ອງໄດ້ເລືອກ: ເຂົາຈະຮັບເອົາເດັກຜູ້ປະເສີດນີ້ວ່າແມ່ນພຣະເມຊີອາຜູ້ທີ່ເຂົາລໍຄອຍມາຕັ້ງນານແລະແມ່ນກະສັດຂອງຊາວຢິວບໍ່, ຫຼືວ່າເຂົາຈະປະຕິເສດພຣະອົງ. ຕຳແໜ່ງກະສັດເໜືອກະສັດຂອງພຣະອົງຮຽກຮ້ອງຄຳຕອບຈາກເຮົາເໝືອນກັນ. ພວກເຮົາຈະຍອມຈຳນົນຕໍ່ການເປັນອົງພຣະຜູ້ເປັນເຈົ້າຂອງພຣະອົງ, ຫຼືວ່າພວກເຮົາຈະປະຕິເສດພຣະອົງ.

*ເປັນຫຍັງຂ່າວປະເສີດຂອງພຣະເຢຊູຈຶ່ງຍັງລົບກວນບາງຄົນທຸກວັນນີ້?*

## 3. <u>ມັດທາຍ 2:9-11</u>.

*9 ເມື່ອພວກໂຫຣາຈານໄດ້ຍິນຄຳສັ່ງດັ່ງນີ້ກໍພາກັນອອກໄປ ເບິ່ງແມ, ດາວທີ່ເຂົາໄດ້ເຫັນເມື່ອປະກົດຂຶ້ນນັ້ນກໍໄດ້ນຳໜ້າເຂົາໄປ*
*ຈົນມາຍຸດຢູ່ຊື່ສະຖານທີ່ກຸມມານຢູ່ນັ້ນ. 10 ເມື່ອພວກໂຫຣາຈານໄດ້ເຫັນດາວນັ້ນແລ້ວກໍມີຄວາມຊົມຊື່ນຍິນດີອັນໃຫຍ່. 11 ຄັນ*
*ເຂົ້າໄປໃນເຮືອນກໍພົບກຸມມານກັບນາງມາຣີອາມານດາຂອງເພິ່ນ ພວກເຂົາຈຶ່ງກົ້ມລົງຂາບໄຫວ້ກຸມມານນັ້ນ ແລ້ວໄຂຫີບເອົາ*
*ຊັບຂອງເຂົາອອກມາຖວາຍແກ່ກຸມມານເປັນເຄື່ອງໂຄລົບ ຄື ຄຳ, ກຳຍານ, ແລະຢາງໄມ້ຫອມ.*

*ມີຂອງຂວັນຫຍັງແດ່ທີ່ເຮົາສາມາດນຳມາຖວາຍແດ່ພຣະເຢຊູ?*

ຂນະທີ່ພວກໂຫຣາຈານເດີນທາງໄລຍະຫ້າໄມລ໌ສູ່ເບັດເລເຮັມ, ເຂົາໄດ້ເຫັນໝາຍສຳຄັນທີ່ຄຸ້ນຕາ. ເຂົາໄດ້ເຫັນ"ດາວທີ່ເຂົາໄດ້ເຫັນຕອນປາກົດຂຶ້ນນັ້ນ"(ຂໍ້ 9). ແລ້ວເຂົາກໍເຫັນເຮືອນຫຼັງນັ້ນຢູ່ຕໍ່ໜ້າເຂົາ, ພວກເຂົາຮູ້ວ່າຫົນທາງອັນຍາວໄກໄດ້ມາເຖິງຈຸດຈົບແລ້ວ. ເຮົາບໍ່ຕ້ອງຟ້າວຜ່ານຂ້າມທ່າທີຂອງເຂົາໄວເກີນໄປ: "ພວກເຂົາເຕັມລົ້ນດ້ວຍຄວາມຍິນດີ." ທ່ານມັດທາຍມີຄວາມປິ້ມປິຕິນຳພວກຫົວກະທິເຖິງຄວາມຮູ້ສຶກຢ່າງແຮງຂອງເຂົາ. ປໂຍກໃນພາສາກຣີກຖືກແປຕາມໂຕວ່າ "ຍິນດີເຫຼືອພັລນາ." ເຮົາບໍ່ຮູ້ວ່າເຂົາໄດ້ເຫັນດາວຄັ້ງແລກເມື່ອໃດ, ການຄົ້ນຄ້ວາທີ່ເຂົາຕ້ອງເຮັດຫຼາຍສ່ຳໃດ, ຫຼືວ່າເຂົາຕ້ອງໃຊ້ເວລາເດີນ

ທາງນານເທົ່າໃດ, ແຕ່ມັນບໍ່ເປັນການຍາກທີ່ຈະອາດພາບສິ່ງເຫຼົ່ານັ້ນ, ຫຼັງຈາກເຂົາໄດ້ໃຊ້ເວລາ, ເຂົາມີຄວາມປິຕິຍິນດີເຕັມທີ. ພວກໂຫຣາຈານພາກັນຄຸເຂົ່າລົງນະມັສການພຣະເຢຊູ, ແລະ "ນຳເອົາຂອງຂວັນອອກມາຖວາຍ." ຄຳກິຣິຍາແປຄຳວ່າ "ນຳເອົາຂອງຂວັນ" ໄດ້ຖືກນຳໃຊ້ໃນພຣະຄັມພີໃໝ່ພົວພັນກັບການຖວາຍແດ່ພຣະເຈົ້າ. ການນຳເອົາຂອງຂວັນເປັນສິ່ງສຳຄັນໂດຍສະເພາະໃນເຂດໃກ້ຕາເວັນອອກ ສມັຍໂບຮານ ເມື່ອບຸກຄົນໃດນຶ່ງເຂົ້າຫາຄົນທີ່ສູງສົ່ງກວ່າ.

1. **ຂອງຂວັນສຳລັບຖານະກະສັດຂອງພຣະອົງ.** ຄຳເປັນໂລຫະທີ່ດີທີ່ສຸດ ແລະມີຄ່າສູງທີ່ສຸດ, ແລະເປັນການສະແດງຄຸນຄ່ານ້ຳໃຈອັນສູງສົ່ງຈາກຜູ້ໃຫ້ ມີຕໍ່ຜູ້ຮັບ.
2. **ຂອງຂວັນສຳລັບຖານະພຣະເຈົ້າຂອງພຣະອົງ.** ກຳຍານແມ່ນຢາງໄມ້ເຫຼື້ອມເປັນເງົາໄດ້ມາຈາກການກຣີດເປືອກໄມ້ຫຼາຍຕົ້ນ. ມັນເປັນສິ່ງທີ່ມີກິ່ນຫອມແລະສັກສິດທີ່ນຳໃຊ້ໃນການຖວາຍບູຊາ.
3. **ຂອງຂວັນສຳລັບການເປັນມະນຸດຂອງພຣະອົງ.** ຢາງໄມ້ຫອມເປັນເຄື່ອງເທດຣາຄາແພງແລະເຄື່ອງຫອມ, ໃຊ້ດອງແລະປຸງນ້ຳມັນຂີ້ເຜີ້ງກາຣະບູນ.

ຂອງຂວັນເຫຼົ່ານີ້ແນ່ນອນສະທ້ອນເຖິງການນະມັສການຂອງພວກໂຫຣາຈານ. ການຕອບສນອງຂອງເຮົາຕໍ່ພຣະເມຊີອາຄວນແມ່ນການນະມັສການເໝືອນກັນ. ພຣະເຢຊູມາເພື່ອປະທານຂອງຂວັນອັນລ້ຳຄ່າຄື: ຄວາມພົ້ນແລະຊີວິດອັນຕລອດໄປເປັນນິດ. ເມື່ອພວກເຮົາຮັບຂອງຂວັນຄືພຣະຄຸນແລະຄວາມຮັກນີ້, ພວກເຮົາກໍຕ້ອງນະມັສການພຣະອົງເໝືອນກັນ.

*ມີທາງໃດແດ່ທີ່ກຸ່ມຂອງເຮົາສາມາດເຮັດຕາມຕົວຢ່າງຂອງພວກໂຫຣາຈານ?*

## ນຳໃຊ້ໃນຊີວິດ

ພຣະເຢຊູນຳພາແລະດູແລໄພ່ພົນຂອງພຣະອົງ. ຈົ່ງເລືອກນຶ່ງໃນການນຳໃຊ້ຕໍ່ລົງໄປນີ້:

- **ຈົ່ງວາງໃຈຜູ້ລ້ຽງຂອງທ່ານ.** ຈົ່ງວາງໃຈພຣະເຢຊູໃຫ້ນຳທ່ານດ້ວຍຄວາມຫ່ວງໃຍ. ຈົ່ງພິຈາຣະນາວ່າມີບ່ອນໃດທີ່ພຣະອົງເອີ້ນທ່ານໃຫ້ເຮັດຕາມ, ແຕ່ທ່ານໄດ້ຂັດຂືນ. ຖ້າມີ, ຈົ່ງຮູ້ວ່າພຣະເຢຊູເປັນພຣະຜູ້ລ້ຽງທ່ານ ແລະຈົ່ງວາງໃຈໃນການນຳພາຂອງພຣະອົງ.
- **ຈົ່ງຮັບຮູ້ກະສັດຂອງທ່ານ.** ພວກໂຫຣາຈານກົ້ມຂາບໃນການຍອມຮັບກະສັດ. ກົ້ມຫຼືຄຸເຂົ່າໃນເວລາທ່ານອະທິຖານໃນອາທິດນີ້ເໝືອນເປັນສັນຍາລັກທາງກາຍວ່າທ່ານຍອມຮັບວ່າພຣະເຢຊູຖານະກະສັດ. ຈົ່ງພິຈາຣະນາຈັດບ່ອນອະທິຖານບ່ອນທີ່ທ່ານສາມາດໃຊ້ເວລາເຝົ້າດ່ຽວເປັນປະຈຳກັບພຣະອົງ.
- **ຈົ່ງແບ່ງປັນເຣື່ອງກ່ຽວກັບກະສັດຜູ້ລ້ຽງຂອງທ່ານ.** ຈົ່ງໃຊ້ປຶ້ມສອດຂ່ອງຂໍ້ພຣະຄັມພີ (concordance) ຫຼື ພຣະຄັມພີທາງອອນໄລ໌ເພື່ອຊອກຫາບ່ອນໃດປາກົດມີຄຳວ່າ "ຜູ້ລ້ຽງແກະ" ຕລອດພຣະຄັມພີ. ສັງເກດວ່າສິ່ງນີ້ຊ່ວຍເພີ່ມຄວາມເຂົ້າໃຈທິດທາງທີ່ພຣະເຢຊູດູແລໄພ່ພົນຂອງພຣະອົງຢ່າງໃດ. ຈົ່ງຊອກຫາບາງຄົນທີ່ທ່ານສາມາດແບ່ງປັນຄວາມຈິງນີ້ໃນອາທິດນີ້.

ຂອບຄຸນພຣະເຈົ້າ ພວກເຮົາຮັບໃຊ້ກະສັດພຣະຜູ້ລ້ຽງຜູ້ດູແລໄພ່ພົນຂອງພຣະອົງເປັນຢ່າງດີ!

**ອຸປຖັມໂດຍ ລາວຊາວເຫີນບັບຕິສສັມພັນ https://ulsb.org/sunday-school-2/ ໂດຍ PSI**